ຫາ ... ແຫ້ງ ...

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສຳນັກງານນາຍົກລັດຖະມົນຕີ

ເລກທີ 90 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 09.06.2008

# ດຳລັດ

## ວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍບໍ່ແຮ່ ສະບັບເລກທີ 049/ສພຊ, ລົງວັນທີ 12 ເມສາ 1997;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 584/ພບ, ລົງວັນທີ 16 ພຶດສະພາ 2008;

## ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການກວດກາແຮ່ທາດທີ່ຂຸດຄົ້ນ, ການຜະລິດຜະລິດຕະພັນແຮ່ທາດ ແລະ ການສົ່ງອອກຜະລິດຕະພັນແຮ່ທາດທຸກປະເທດ ແນໃສ່ເພີ່ມມູນຄ່າຜະລິດຕະພັນແຮ່ທາດ ກ່ອນການສົ່ງອອກໄປຕ່າງປະເທດ ແລະ ສ້າງພື້ນຖານວັດຖຸເຕັກນິກໃຫ້ແກ່ອຸດສາຫະກຳບໍ່ແຮ່ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

**ມາດຕາ 2. ນິຍາມ**

- ແຮ່ດິບ ແມ່ນແຮ່ທີ່ໄດ້ຂຸດຄົ້ນອອກມາຈາກໜ້າດິນ ຫລື ໃຕ້ດິນ ຊຶ່ງຍັງບໍ່ທັນໄດ້ຜ່ານຂັ້ນຕອນການປຸງແຕ່ງ;

- ຜະລິດຕະພັນແຮ່ທາດ ແມ່ນແຮ່ດິບທີ່ໄດ້ຮັບການປຸງແຕ່ງເຄິ່ງສຳເລັດຮູບ ຫລື ສຳເລັດຮູບ;
- ຜະລິດຕະພັນແຮ່ທາດເຄິ່ງສຳເລັດຮູບ ແມ່ນທາດທີ່ຖືກປຸງແຕ່ງຂັ້ນຕົ້ນ ຫລື ຂັ້ນກາງ.
- ຜະລິດຕະພັນແຮ່ທາດສຳເລັດຮູບ ແມ່ນຜະລິດຕະພັນສຸດທ້າຍຂອງອຸດສາຫະກຳບໍ່ແຮ່.

**ມາດຕາ 3. ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ມີຜົນສັກສິດໃຊ້ບັງຄັບ ຕໍ່ກັບບຸກຄົນ ຫລື ນິຕິບຸກຄົນ ທີ່ດຳເນີນທຸລະກິດ ກ່ຽວກັບກິດຈະການແຮ່ທາດໃນຂອບເຂດດິນແດນແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ໝວດທີ II
## ການຜະລິດຜະລິດຕະພັນແຮ່ທາດ

**ມາດຕາ 4. ການຜະລິດແຮ່ດິບ**

ການຜະລິດແຮ່ດິບ ແມ່ນການຂຸດຄົ້ນແຮ່ອອກມາຈາກໜ້າດິນ ຫລື ໃຕ້ດິນ ຊຶ່ງຍັງບໍ່ທັນໄດ້ຜ່ານຂັ້ນຕອນການປຸງແຕ່ງ ດ້ວຍການນຳໃຊ້ເຕັກໂນໂລຊີໃນລະດັບໃດໜຶ່ງ, ບໍ່ທັນໄດ້ຍົກຄຸນນະພາບແຮ່ທາດໃຫ້ສູງຂຶ້ນກວ່າເກົ່າ.

**ມາດຕາ 5. ການຜະລິດຜະລິດຕະພັນແຮ່ທາດ**

ຜະລິດຕະພັນແຮ່ທາດ ແມ່ນແຮ່ດິບທີ່ໄດ້ຮັບການປຸງແຕ່ງເຄິ່ງສຳເລັດຮູບ ຫລື ສຳເລັດຮູບ.

- ການຜະລິດຜະລິດຕະພັນແຮ່ດິບ ເປັນຜະລິດຕະພັນແຮ່ທາດເຄິ່ງສຳເລັດຮູບ ແມ່ນແຮ່ທາດທີ່ຖືກປຸງແຕ່ງຂັ້ນຕົ້ນ ຫລື ຂັ້ນກາງ ດ້ວຍການບົດ, ທຍໍ້, ການລ້າງ, ການອົບ, ການກັ່ນຕອງ, ການແຍກແຮ່ດິບໃຫ້ມີຄວາມເຂັ້ມສູງຂຶ້ນກວ່າເກົ່າ.
- ການຜະລິດຜະລິດຕະພັນແຮ່ທາດສຳເລັດຮູບ ແມ່ນຜະລິດຕະພັນສຸດທ້າຍຂອງອຸດສາຫະກຳບໍ່ແຮ່ສຳເລັດຮູບ ດ້ວຍການສືບຕໍ່ປຸງແຕ່ງແຮ່ທາດເຄິ່ງສຳເລັດຮູບ ໃຫ້ກາຍເປັນຜະລິດຕະພັນສຸດທ້າຍຂອງອຸດສາຫະກຳບໍ່ແຮ່, ເຊັ່ນ: ການນຳເອົາແຮ່ກົ່ວກັ່ນຕອງ ໄປຫລອມເປັນກົ່ວໂລຫະ, ການນຳເອົາຝຸ່ນທອງ ໄປຫລອມເປັນທອງໂລຫະ, ການນຳເອົາຝຸ່ນເຫລັກໄປຫລອມເປັນເຫລັກໂລຫະ ແລະ ແຮ່ອື່ນໆ ດ້ວຍວິທີການຕ່າງໆ ຕາມຂະບວນການທາງດ້ານເຕັກນິກຂອງອຸດສາຫະກຳບໍ່ແຮ່.

**ມາດຕາ 6. ການສົ່ງເສີມການຜະລິດຜະລິດຕະພັນແຮ່ດິບ**

ລັດຖະບານແຫ່ງ ສປປ ລາວ ສົ່ງເສີມບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດສຳປະທານຂຸດຄົ້ນ ຫລື ມີທະບຽນເກັບຊື້ແຮ່ດິບ ຜະລິດເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫລື ສຳເລັດຮູບ ເພື່ອ

ຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ ຕາມນະໂຍບາຍຂອງລັດຖະບານວາງອອກໃນແຕ່ລະໄລຍະ.

ມາດຕາ 7. ຜະລິດຕະພັນແຮ່ທາດທີ່ສົ່ງເສີມເພື່ອການສົ່ງອອກ

ຜະລິດຕະພັນແຮ່ທາດທີ່ໄດ້ຮັບການສົ່ງເສີມເພື່ອການສົ່ງອອກ ແມ່ນແຮ່ທາດໂລຫະ, ອະໂລຫະ, ແຮ່ທາດແຫລວ, ທາດອາຍ ຊຶ່ງຕ້ອງໄດ້ມີການປຸງແຕ່ງເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫລື ຜະລິດຕະພັນສຳເລັດຮູບສາກ່ອນ ຈຶ່ງສາມາດສົ່ງອອກໄດ້.

ມາດຕາ 8. ຜະລິດຕະພັນແຮ່ທາດທີ່ສົ່ງເສີມການຜະລິດ ແລະ ນຳໃຊ້ຢູ່ພາຍໃນ

ຜະລິດຕະພັນແຮ່ທາດທີ່ໄດ້ຮັບການສົ່ງເສີມ ເພື່ອການຜະລິດ ແລະ ນຳໃຊ້ຢູ່ພາຍໃນປະເທດ ແມ່ນຖ່ານຫີນທຸກປະເພດ.

ມາດຕາ 9. ແຮ່ທາດທີ່ຫ້າມດຳເນີນກິດຈະການ

ແຮ່ທາດກຳມັນຕະພາບລັງສີທຸກຊະນິດ ແມ່ນແຮ່ທາດທີ່ຫ້າມດຳເນີນກິດຈະການໃນການສຳຫລວດ, ຂຸດຄົ້ນ, ປຸງແຕ່ງ ຫລື ຜະລິດ, ຄອບຄອງ, ເຄື່ອນຍ້າຍ, ຊື້ຂາຍ ແລະ ສົ່ງອອກ.

## ໝວດທີ III
## ການຄຸ້ມຄອງການຜະລິດ ແລະ ຜະລິດຕະພັນແຮ່ທາດ

ມາດຕາ 10. ການຄຸ້ມຄອງຜະລິດຕະພັນແຮ່ທາດ

ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດບໍ່ແຮ່ ຕ້ອງໄດ້ສ້າງແຜນການຂຸດຄົ້ນ, ປຸງແຕ່ງ ຫລື ຜະລິດ, ຈຳໜ່າຍ ແລະ ສົ່ງອອກຜະລິດຕະພັນແຮ່ທາດ. ແຜນການດັ່ງກ່າວຕ້ອງຖືກຮັບຮອງຈາກກະຊວງພະລັງງານ ແລະ ບໍ່ແຮ່ຢ່າງເປັນທາງການ ຈຶ່ງປະຕິບັດໄດ້.

ບຸກຄົນ ຫລື ນິຕິບຸກຄົນ ທີ່ດຳເນີນທຸລະກິດບໍ່ແຮ່ ຕ້ອງລາຍງານຈຳນວນ ແລະ ຄຸນນະພາບຂອງຜະລິດຕະພັນແຮ່ທາດແຕ່ລະປະເພດທີ່ຕົນຜະລິດໄດ້ ໃຫ້ແກ່ກະຊວງພະລັງງານ ແລະ ບໍ່ແຮ່ຮັບຊາບເປັນປະຈຳ ແຕ່ລະເດືອນ, ງວດ, ປີ ແລະ 5 ປີ.

ມາດຕາ 11. ການກວດກາຄຸນນະພາບຜະລິດຕະພັນແຮ່ທາດ

ບຸກຄົນ ຫລື ນິຕິບຸກຄົນ ທີ່ດຳເນີນທຸລະກິດບໍ່ແຮ່ຕ້ອງສົ່ງຕົວຢ່າງ ແລະ ຜົນວິໄຈຂອງຜະລິດຕະພັນແຮ່ທາດທີ່ຕົນຜະລິດໄດ້ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອກວດສອບຄຸນນະພາບຂອງຜະລິດຕະພັນແຮ່ທາດ ແລະ ອອກໃບຢັ້ງຢືນຮັບຮອງຢ່າງເປັນທາງການ ຈຶ່ງສາມາດຈຳໜ່າຍ ແລະ ສົ່ງອອກໄດ້.

## ໝວດທີ IV
## ການສົ່ງອອກຜະລິດຕະພັນແຮ່ທາດ

**ມາດຕາ 12. ລະບຽບການໃນການສົ່ງອອກຜະລິດຕະພັນແຮ່ທາດ**

ລັດຖະບານແຫ່ງ ສປປ ລາວ ມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ສົມທົບກັບກະຊວງ, ອົງການຕ່າງໆ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຜູ້ກຳນົດລະບຽບໃນການສົ່ງອອກຜະລິດຕະພັນແຮ່ທາດແຕ່ລະປະເພດ ເປັນແຕ່ລະໄລຍະ.

**ມາດຕາ 13. ຂັ້ນຕອນກະກຽມການສົ່ງອອກ**

ຂັ້ນຕອນໃນການກະກຽມການສົ່ງອອກ ແມ່ນໃຫ້ປະຕິບັດຕາມລະບຽບການສົ່ງອອກ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ທີ່ກຳນົດອອກເປັນແຕ່ລະໄລຍະ.

**ມາດຕາ 14. ການອະນຸມັດສົ່ງອອກຜະລິດຕະພັນແຮ່ທາດ**

ບຸກຄົນ ຫລື ນິຕິບຸກຄົນ ກ່ອນຈະສົ່ງອອກຜະລິດຕະພັນແຮ່ທາດ ຕ້ອງມີແຜນການສົ່ງອອກທີ່ໄດ້ຮັບການອະນຸມັດຈາກກະຊວງອຸດສາຫະກຳ ແລະ ການຄ້າ ໂດຍສອດຄ່ອງກັບແຜນການຂຸດຄົ້ນ, ປຸງແຕ່ງ ຫລື ຜະລິດ, ຈຳໜ່າຍ ຂອງກະຊວງພະລັງງານ ແລະ ບໍ່ແຮ່ ເປັນປະຈຳແຕ່ລະປີ. ກ່ອນຈະສົ່ງອອກຜະລິດຕະພັນແຮ່ທາດແຕ່ລະຄັ້ງ ຕ້ອງຜ່ານການກວດກາ ແລະ ໄດ້ເສຍຄ່າຊັບພະຍາກອນ, ພາສີ, ອາກອນ ແລະ ຄ່າທຳນຽມອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍຂອງ ສປປ ລາວ ຢ່າງຄົບຖ້ວນ.

ບຸກຄົນ ຫລື ນິຕິບຸກຄົນ ທີ່ສົ່ງອອກຜະລິດຕະພັນແຮ່ທາດ ຕ້ອງວາງເງິນມັດຈຳ ຈຳນວນສິບສ່ວນຮ້ອຍ (10%) ຂອງມູນຄ່າປະເມີນຂອງຜະລິດຕະພັນແຮ່ທາດທີ່ສົ່ງອອກ ໂດຍມອບຜ່ານກະຊວງການເງິນ.

**ມາດຕາ 15. ການຊຳລະສະສາງ ກ່ຽວກັບການສົ່ງອອກ**

ຜະລິດຕະພັນແຮ່ທາດ ທີ່ສົ່ງອອກຈາກ ສປປ ລາວ ທີ່ມີມູນຄ່າເກີນວົງເງິນສົດ ທີ່ທະນາຄານແຫ່ງ ສປປ ລາວ ອະນຸຍາດໃຫ້ຖືນຳເຂົ້າ-ນຳອອກ ສປປ ລາວໃນແຕ່ລະໄລຍະນັ້ນ ຕ້ອງຖືກຊຳລະໂດຍການໂອນຜ່ານລະບົບທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ ແລະ ຕ້ອງປະຕິບັດພັນທະໃນການຊຳລະສະສາງ ໃຫ້ຖືກຕ້ອງຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ໝວດທີ V
## ການກວດກາການສົ່ງອອກຜະລິດຕະພັນແຮ່ທາດ

**ມາດຕາ 16 ການກວດກາກ່ອນການເຄື່ອນຍ້າຍອອກຈາກສະຖານທີ່ການຜະລິດ**

ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງ ແລະ ກວດກາຈໍານວນ ແລະ ຄຸນນະພາບ ພ້ອມທັງປະເມີນມູນຄ່າ ກ່ອນການເຄື່ອນຍ້າຍຜະລິດຕະພັນແຮ່ທາດອອກຈາກສະຖານທີ່ປຸງແຕ່ງ ຫລື ຜະລິດ. ຄະນະດັ່ງກ່າວປະກອບດ້ວຍຜູ້ຕາງໜ້າຂອງກະຊວງ, ອົງການທີ່ກ່ຽວຂ້ອງຂອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຊຶ່ງມີໜ້າທີ່ເກັບຕົວຢ່າງຂອງຜະລິດຕະພັນແຮ່ທາດ ເພື່ອນໍາໄປກວດສອບ ແລະ ເຊັນຢັ້ງຢືນເອກະສານອະນຸຍາດສົ່ງອອກ.

**ມາດຕາ 17. ຈຸດຕິດຕາມ ແລະ ກວດກາການສົ່ງອອກຜະລິດຕະພັນແຮ່ທາດ**

ຈຸດຕິດຕາມ ແລະ ກວດກາການສົ່ງອອກຜະລິດຕະພັນແຮ່ທາດ ຈະຖືກສ້າງຕັ້ງຂຶ້ນຕາມສະຖານທີ່ຂຸດຄົ້ນ, ໂຮງງານປຸງແຕ່ງ ຫລື ໂຮງງານຫລອມ, ຢູ່ຈຸດດ່ານຊາຍແດນຕ່າງໆຂອງ ສປປ ລາວ ຊຶ່ງຈະມີເຈົ້າໜ້າທີ່ກ່ຽວຂ້ອງ ເປັນຜູ້ກວດກາຄວາມຖືກຕ້ອງ ຂອງເອກະສານອະນຸຍາດການສົ່ງອອກ.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ ພ້ອມທັງສັນຍາ, ແຜນການທີ່ວາງອອກ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍໃຫ້ຄວາມສະດວກແກ່ການດໍາເນີນທຸລະກິດ ຫລື ອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 19. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດໃຫ້ດເນີນທຸລະກິດດ້ານບໍ່ແຮ່ ຫາກໄດ້ນໍາອອກແຮ່ທາດວັດຖຸດິບ, ຜະລິດຕະພັນແຮ່ທາດບາງປະເພດ ຊຶ່ງບໍ່ໄດ້ຮັບອະນຸຍາດ ຫລື ຫລົບຫລີກການເສຍພາສີ, ອາກອນຕ່າງໆ ຈະຕ້ອງໄດ້ເສຍພາສີ, ອາກອນຕ່າງໆຄືນ ພ້ອມທັງຖືກກ່າວເຕືອນ, ປັບໃໝ ຫລື ຖືກໂທດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີການກະທໍາຜິດສະຖານເບົາ ຫລື ໜັກ.

ໝວດທີ VII

ບົດບັນຍັດສຸດທ້າຍ

ມາດຕາ 20. ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນເຜີຍແຜ່ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີຄວາມສັກສິດ ແລະ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 21. ຜົນສັກສິດ

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ກຳນົດ, ຂໍ້ຕົກລົງ ແລະ ຄຳສັ່ງທີ່ປະກາດໃຊ້ໃນເມື່ອກ່ອນ ຫາກມີເນື້ອໃນຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ນາຍົກລັດຖະມົນຕີແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ